## *ພຣະເວຕນາງມະທີຂອງເຮົາຊາວຫຼັກເຈັດ*

ສຽງແຊວໆຈາຕ້ານ ຊາວບ້ານກ່າວສັລເສີນ
ຄືຂັນເງິນ ທົງສວັດ ຈັດໃຫ້ເປັນຜົວເມັຽແກ້ວ
ສົມດັ່ງແນວຄອງຫມັ້ນ ອຸດົມການກໍດີດັ່ງ
ເປັນຜົວເມັຽຕົວຢ່າງ ທາງສັງຄົມກໍຮັບຮູ້ ຊູຄ້ຳໄດ້ນັບຖື

ນັບບໍ່ພໍທໍ່ໃດນີ້ ຄືຕັ້ງແຕ່ງານສັງສັນ
ເພິ່ນຈັດງານໄດ້ເຖິງໃຈ ຜູ່ທີ່ໄປຮ່ວມຍໍຍ້ອງ
ເພາະວ່າສອງຜົວເມັຽໃຫ້ ຄວາມຈິງໃຈ ຢ່າງຖ້ວນທີ່
ພ້ອມທັງສອງບຸຕຕີ ມີນ້ຳໃຈປະເສີດກ້າ ປັນຍາຊີ້ສຽບແຫຼມ

ແຖມວັດວາກໍຫາໄດ້ ເລືອກເຟັ້ນຮ່ອນຄົນດີ
ໃຫ້ຂັນເງິນເປັນມະທີ ຜູ້ເພິ່ນມີບຸນລົ້ນ
ສ່ວນອີກຄົນຄືອ້າຍ ທົງສວັດເປັນພຣະເວຕ
ເນຣະເທດອອກຈາກບ້ານ ວັງກວ້າງໄດ້ຫ່າງໄກ

ໄຕຣປິດົຄໄດ້ກ່າວໄວ້ ພຣະເວຕຊື່ຖືສັຈ
ສ່ວນອ້າຍທົງສວັດ ກໍດັ່ງດຽວກັນແທ້
ມີບັນຫາພາກັນແກ້ ສອງຜົວເມັຽເພິ່ນຊວ້ານຊ່ອຍ
ສຽງເວົ້ານວນຫວານອິ່ນອ້ອຍ ຂັນເງິນນັ້ນດັ່ງມະທີ

ແຕ່ວ່າໃນເຣື່ອງນີ້ ຍັງໄດ້ກ່າວເຖິງຕາພາມ
ພາຍຍ່າມຫາຫຽວຂໍ ຫມໍ້ບ່ວງຊາມຂອງໃຊ້
ຮູ້ວ່າຕົນຂໍໄດ້ ເລີຍຂານຂໍສອງບຸຕອ່ອນ

ກັນທາຊາລີກໍອ້ອນວອນ  ບໍ່ຢາກໄປຮ່ວມເສັ້ນ  ຢ້ານພາມເຖົ້າໃຊ້ທຸບຕີ

ທິງສວັດຜູ້ນີ້  ຍອມທານລູກອ່ອນສອງສີ
ແຕ່ບໍ່ຍອມທານມະທີ  ດັ່ງກ່າວມີໃນເຣື່ອງ
ໃຈບໍ່ເຄືອງທານຫ້າມ  ຕອນພາມຂໍລູກອ່ອນ
ບາດຂໍແກ້ວກໍ່າກ້ອນ  ມະທີເຈົ້າພັດວ່າຫວງ

ເພິ່ນຍອມແປປ່ຽນເຣື່ອງ  ຍອມທານເຄື່ອງເຮືອນຊານ
ທານກັນທາຊາລີ  ບຸຕອ່ອນສີຫມອງເສົ້າ
ແຕ່ບໍ່ຍອມທານເຈົ້າ  ນາງຂັນເງິນມະທີມິ່ງ
ທຸກສິ່ງໃນໂລກນີ້  ບໍ່ຍອມໃຫ້ແຕ່ຜູ່ດຽວ  ນີ້ແລ້ວ

ສວມບົດບາດໄດ້ຄ່ອງແຄ້ວ  ຄືແນວດັ່ງນາມກະສັດ
ທັງຂັນເງິນ  ທິງສວັດ  ຕອນແຫ່ແຫນແພນກັ້ງ
ທັງສອງມີໃຈກວ້າງ  ທັມມະທານບໍ່ເຂີນຂາດ
ບຸນແຕ່ຊາຕກ່ອນພຸ້ນ  ມາຫມູນຄໍ້າລໍ່າຊູ  ເຈົ້າແລ້ວ

ຂໍໃຫ້ບຸນສິ່ງຍູ້  ຊູສິ່ງເຈົ້າທັງສອງ  ແດ່ທ້ອນ
ຈິ່ງໄດ້ຄອງຄວາມສຸຂ  ທຸກຢ່າວິນວຽນໃກ້
ໃຫ້ຄຶດມາຫາໄດ້  ສົມຕັ້ງໃຈໄວ້ທຸກຢ່າງ
ຄິດອັນໃດໃຫ້ສົມຫວັງ  ທັງບຸຕຕີອ່ອນນ້ອຍ  ໃຫ້ສຸຂລົ້ນຢ່າຂຸ່ນເຄືອງ

ໃຫ້ເປັນສົມດັ່ງເຣື່ອງ  ເວຕສັນຕະຊາດົກ
ປາງເມື່ອພາມຊູຊົກ  ໄດ້ສິ່ງຄືນສອງແກ້ວ
ແລ້ວຈົບຊາວວັງກວ້າງ  ເດີນດົງດັ້ນເຖິງທີ່
ເຊີນພຣະເວຕນາງມະທີ  ທັງກັນທາຊາລີ  ກັບຄືນເມືອສືບສ້າງ  ເມືອງກວ້າງໃຫ້ຢູ່ເຢັນ